## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 27 ພຶສພາ 2007 (5-27-2007)

# ຈົ່ງຄືນດີກັນອີກ

**ຂໍ້ພຣະຄັມພີໃນບົດຮຽນ:** ປະຖົມມະການ 50: 15-21; ມັດທາຍ 5:23-24; ໂກໂລຊາຍ 3:12-15

**ພຣະຄັມພີແຫ່ງຄວາມຈິງ:** ພວກຄຣິສຕຽນຕ້ອງເຮັດທຸກວິທີທາງໃນການຄືນດີກັບຜູ້ອື່ນໆໃນກໍຣະນີທີ່ບໍ່ຖືກຕ້ອງປອງດອງກັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ເປັນຜູ້ສ້າງຄວາມສງົບສຸກທີ່ແທ້ຈິງແລະແກ້ໄຂບັນຫາຂໍ້ຂັດແຍ່ງສ່ວນຕົວຂອງແຕ່ລະຄົນໂດຍ:

- ການເຂົ້າໃຈເຖິງສິ່ງທີ່ເປັນສ່ວນຂອງການຄືນດີກັນແທ້ໆ; ແລະ
- ການຕັດສິນໃຈໃຫ້ຖືກຕ້ອງສເມີຕໍ່ການຢາກຄືນດີກັນແທ້ໆໃນຍາມບໍ່ຖືກຕ້ອງປອງດອງກັນ.

## ຂ້າພະເຈົ້າຈະຫາວິທີໃຫ້ຄືນດີກັນຢ່າງແທ້ຈິງໃນຍາມບໍ່ຖືກຕ້ອງປອງດອງກັນໄດ້ຢ່າງໃດ?

ຂ້າພະເຈົ້າໄດ້ກັບໄປໂບດເກົ່າທີ່ເຄີຍສັງກັດຢູ່ເພື່ອນຳພິທີສລອງງານ "ການກັບບ້ານ". ໃນຂນະທີ່ກຳລັງນະມັສການແລະລໍຖ້າໃຫ້ເຖິງເວລາເທສນາຢູ່ນັ້ນ, ຄວາມຊົງຈຳອັນຫລວງຫລາຍພາຍມາກໍຫລັ່ງເຂົ້າສູ່ຈິດໃຈ. ຄວາມຊົງຈຳຂອງຂ້າພະເຈົ້າມີແຕ່ສິ່ງທີ່ດີໆ, ແຕ່ວ່າຄວາມຄິດທີ່ກ່ຽວກັບດານີເອນ(ບໍ່ແມ່ນຊື່ແທ້)ແມ່ນຍັງເຈັບປວດຢູ່. ດານີເອນແລະຂ້າພະເຈົ້າໄດ້ມີການຂັດແຍ່ງບໍ່ລົງລອຍກັນໃນການຕັດສິນໃຈບາງຢ່າງຈົນເລີກບໍ່ເປັນເພື່ອນກັນອີກຕໍ່ໄປ.

ເປັນເວລາເຖິງສິບເຈັດປີແລ້ວ, ທຸກໆຄັ້ງທີ່ຂ້າພະເຈົ້າກັບຄືນມາເທສນາທີ່ໂບດຍາມໃດ, ດານີເອນຈະບໍ່ມາໃກ້ເລີຍ. ຂນະທີ່ຂ້າພະເຈົ້າຂຶ້ນໄປທີ່ທຳມາດເພື່ອເທສນາ. ຂ້າພະເຈົ້າເຫລືອບຕາໄປທົ່ວຫ້ອງນະມັສການແລະກໍເຫັນດານີເອນນັ່ງຢູ່ແຖວສຸດທ້າຍພຸ້ນ. ຂ້າພະເຈົ້າເກືອບລືມຄຳເທສນາ. ຂ້າພະເຈົ້າຫວັງວ່າມັນຄົງເປັນວັນທີ່ຈະໄດ້ຄືນດີກັນແທ້ໆ.

ພວກຄຣິສຕຽນຈະສວຍເອົາໂອກາດທີ່ພຣະເຈົ້າມອບໃຫ້ແກ່ພວກເຂົາໃຫ້ຄືນດີກັບຄົນອື່ນໆໄດ້ຢ່າງໃດ? ຂໍ້ພຣະຄຳທັງຫລາຍທີ່ພວກເຮົາຈະສຶກສາໃນມື້ນີ້ສາມາດນຳພວກເຮົາໃຫ້ຊອກຫາຄວາມສງົບສຸກທີ່ແທ້ຈິງ.

## ສຶກສາພຣະຄັມພີ

### 1. ຕຽມຕົວທີ່ຈະເລີ່ມຕົ້ນຂຶ້ນໃຫມ່ (ປະຖົມມະການ 50:15-21)

ຢາໂຄບໄດ້ເສັຍຊີວິດໄປແລ້ວ. ພວກລູກຊາຍທັງຫລາຍກໍພາກັນໂສກເສົ້າ. ແລະພວກເຂົາກໍຢ້ານວ່ານ້ອງຊາຍຂອງພວກເຂົາຈະແກ້ແຄ້ນອີກດ້ວຍ. ພວກອ້າຍຂອງໂຢເຊບໄດ້ຂາຍລາວໃຫ້ເປັນຂ້າທາດ. ດຽວນີ້ໂຢເຊບໄດ້ເປັນຜູ້ມີອຳນາດສູງຜູ້ນຶ່ງໃນປະເທດອີຢິບ, ສາມາດໃສ່ໂທດຢ່າງຫນັກແກ່ພວກອ້າຍຂອງລາວກໍໄດ້. ຊີວິດຂອງພວກເຂົາກໍຈະລຳບາກຖ້າຫາກວ່າໂຢເຊບເລືອກທີ່ຈະແກ້ແຄ້ນຄືນ. ຊີວິດຂອງພວກເຮົາກໍຈະລຳບາກເຊັ່ນດຽວກັນຖ້າຫາກວ່າພວກເຮົາຫາກເລືອກທີ່ຈະແກ້ແຄ້ນຕໍ່ຜູ້ທີ່ເຮັດໃຫ້ເຮົາເຈັບປວດ. ພວກເຮົາ, ປຽບເຫມືອນໂຢເຊບ, ເລືອກເອົາທາງທີ່ດີໄປກວ່ານັ້ນ.

ຂນະທີ່ໂຢເຊບຍັງຮີ່ນຕອງວ່າຈະເຮັດແນວໃດຕໍ່ພວກອ້າຍຂອງລາວ. ລາວຄຳນຶງເຖິງຄວາມເວົ້າສຸດທ້າຍຂອງຜູ້ເປັນພໍ່: **ກະຣຸນາຍົກໂທດໃຫ້ພວກອ້າຍຂອງເຈົ້າເດີ.** ຂນະທີ່ພວກເຮົາຈະຕັດສິນໃຈໂຕ້ຕອບຕໍ່ຜູ້ທີ່ໄດ້ເຮັດໃຫ້ເຮົາ

ເຈັບປວດນັ້ນ, ພວກເຮົາຄວນຈະຟັງຄຳສັ່ງພຣະບິດາຂອງພວກເຮົາຜູ້ສະຖິດໃນສວັນ. ຄຳບັນຊາຂອງພຣະອົງໃຫ້ພວກເຮົາຍົກໂທດໃຫ້ຜູ້ທີ່ເຮັດໃຫ້ເຮົາເຈັບປວດນັ້ນ. ພຣະເຈົ້າປະສົງຢາກໃຫ້ພວກເຮົາຄືນດີກັນໃນທຸກໆໂອກາດ.

ເມື່ອໂຢເຊບໄດ້ຮັບຄຳສັ່ງນີ້ລາວກໍຮ້ອງໄຫ້. ຄວາມໂສກເສົ້າຂອງລາວເບິ່ງຄືວ່າແມ່ນມາຈາກການເສັຽຊີວິດຂອງພໍ່ລາວ, ພ້ອມທັງຈາກຮອຍເປື້ອນຈາກສາຍສຳພັນຂອງພວກອ້າຍຂອງລາວດ້ວຍ. ກ່ອນທີ່ລາວຈະສາມາດຄືນດີກັບພວກອ້າຍຂອງລາວໄດ້ຢ່າງແທ້ຈິງນັ້ນ. ໂຢເຊບຈຳເປັນຕ້ອງໄດ້ປ່ອຍຕົວເອງໃຫ້ສຳຜັດກັບຄວາມເຈັບປວດອັນນັ້ນ. ການຍົກໂທດທີ່ລາວບໍ່ໄດ້ສຳຜັດກັບຄວາມເຈັບປວດກໍຄືການທີ່ເອົາແຜ່ນຢາງຕິດບາດມາປົກປິດຮອຍບາດແຜ. ການຫລັ່ງນ້ຳຕາຂອງລາວກໍເປັນບາດກ້າວທີ່ສຳຄັນໃນການປ່ອຍໃຫ້ຄວາມເຈັບປວດອອກໄປ ແລະປ່ອຍພວກອ້າຍຂອງລາວໃຫ້ອອກຈາກຄວາມກົນແຫນງຂອງພວກເຂົາ.

ຄວາມປາຖນາຢາກຄືນດີກັນບໍ່ໄດ້ເຮັດໃຫ້ຄວາມເຈັບປວດຫາຍໄປຢ່າງກະທັນຫັນ, ແຕ່ວ່າມັນສາມາດເຮັດໃຫ້ພວກເຮົາກ້າສຳຜັດກັບມັນແລະສະແດງຄວາມຮູ້ສຶກນັ້ນອອກມາ. ພວກເຮົາກໍຄືກັບໂຢເຊບ, ຕ້ອງໄດ້ຮ້ອງໄຫ້, ຫລັ່ງນ້ຳຕາແລະຄວາມເຈັບປວດຂອງພວກເຮົາອອກ ເພື່ອພວກເຮົາຈະສາມາດຍົກໂທດໃຫ້ແກ່ຜູ້ທີ່ເຮັດໃຫ້ເຮົາເຈັບປວດ.

ຍ້ອນຄວາມຢ້ານ, ພວກອ້າຍຂອງໂຢເຊບຈຶ່ງມາກົ້ມຂາບຕໍ່ໜ້າລາວແລະເວົ້າວ່າ, "ພວກເຮົາຢູ່ນີ້ເໝືອນຂ້າໃຊ້ຂອງທ່ານແລ້ວ." ໂຢເຊບປະຕິເສດຢ່າງສລາດຕໍ່ຄຳສເນີຂອງພວກເຂົາ. ລາວບໍ່ຕ້ອງການຂ້າໃຊ້ມາເຝົ້າຮັກສາຈົນສິ້ນຊີວິດຂອງລາວ; ລາວຕ້ອງການໃຫ້ພວກອ້າຍມີຄວາມຮັກ. ດັ່ງນັ້ນໂຢເຊບຈຶ່ງໄດ້ເລືອກເອົາການຄືນດີກັນ.

ເມື່ອຄົນອື່ນໆຫາກເຮັດໃຫ້ພວກເຮົາເຈັບປວດ, ພວກເຮົາກໍມີທາງເລືອກເຊັ່ນກັນ-ພວກເຮົາຕ້ອງການຢາກໄດ້ຂ້ອຍຂ້າເພື່ອບົວລະບັດເຮົາບໍ່ ຫລືອ້າຍເອື້ອຍນ້ອງທີ່ມີຄວາມຮັກ? ພວກເຮົາບໍ່ສາມາດໄດ້ທັງສອງທາງ. ການຄືນດີກັນເຮັດໃຫ້ພວກທີ່ເຮັດໃຫ້ເຮົາເຈັບປວດມີເສຣີພາບໃນຊີວິດແລະເຮັດໃຫ້ພວກເຮົາມີເສຣີພາບທີ່ຈະຮັກພວກເຂົາຄືນ.

ໂຢເຊບຊະນະຕໍ່ການທົດລອງໃນການລົງໂທດພວກອ້າຍຂອງລາວໄດ້ຢ່າງໃດ? ເພາະວ່າລາວບໍ່ສາມາດຍົກຕົວເອງຂຶ້ນ**ໄປສູ່ບ່ອນຂອງພຣະເຈົ້າໄດ້**. ລາວຮູ້ວ່າມີແຕ່ພຣະເຈົ້າເທົ່ານັ້ນເປັນຜູ້ຕັດສິນຕົວລາວແລະພວກອ້າຍຂອງລາວ. ພວກເຮົາກໍເຊັ່ນດຽວກັນ ຖ້າວ່າພວກເຮົາຫາກຢາກຄືນດີກັນເຮົາຕ້ອງໃຫ້ພຣະເຈົ້າເປັນພຣະເຈົ້າແລະອຸທິດຕົວພວກເຮົາເອງໃນການສ້າງຄວາມສງົບສຸກ.

ໂຢເຊບຕຽມພ້ອມແລ້ວທີ່ຈະຕັ້ງຕົ້ນໃໝ່ກັບພວກອ້າຍຂອງລາວ ເພາະວ່າລາວຮູ້ວ່າພຣະເຈົ້າກຳລັງກະທຳງານຂນະທີ່ລາວຢູ່ໃນຄວາມເຈັບປວດນັ້ນ. **ການທີ່ພວກເຈົ້າໄດ້ເຮັດອຸບາຍຊົ່ວຕໍ່ຂ້ອຍນັ້ນ ບັດນີ້ ພຣະເຈົ້າໄດ້ຕອບຄືນດ້ວຍການດີ**. ເມື່ອໃດທີ່ພວກເຮົາຈື່ຈຳໄດ້ວ່າພຣະເຈົ້າຍິ່ງໃຫຍ່ພໍທີ່ຈະເຮັດສິ່ງດີໆຈາກສິ່ງທີ່ຊົ່ວຮ້າຍທຸກຢ່າງທີ່ຄົນອື່ນໆກະທຳຕໍ່ພວກເຮົານັ້ນ, ເມື່ອນັ້ນແຫລະພວກເຮົາສາມາດທີ່ຈະຮ່ວມມືກັບພຣະອົງໃນການກະທຳດີທີ່ຈະເປັນທີ່ພຣະພອນສູ່ຊີວິດ**ຂອງຄົນອື່ນໆອີກ**.

## ໒. <u>ໃຫ້ການຄືນດີກັນເປັນລຳດັບນຶ່ງ</u> (ມັດທາຍ 5:23-24)

ໃນປໂຍກທີ່ເວົ້າວ່າ**ທ່ານມີຂໍ້ຂຸ້ນເຄືອງກັບອ້າຍນ້ອງຂອງຕົນດ້ວຍເຣື່ອງໃດເຣື່ອງນຶ່ງ**ເບິ່ງເໝືອນວ່າເລັງເຖິງຜູ້ທີ່ກໍ່ເຫດຫລືອາດເລັງເຖິງຜູ້ຖືກຮັບເຫດການ; ຄຳເວົ້າຂອງພຣະເຢຊູທີ່ກ່າວເຖິງແທ່ນບູຊາໄດ້ສອນພວກເຮົາວ່າການຄືນດີກັນນັ້ນມັນສຳຄັນຫລາຍ. ຜູ້ທີ່ຈະຖວາຍບູຊາກໍນຳເຄື່ອງຖວາຍຂອງລາວມາຫາປະໂລຫິດ. ລາວຈະວາງມືໃສ່ເຄື່ອງບູຊານັ້ນເພື່ອໃຫ້ສັດເປັນຕົວແທນໃນການນຳເອົາຄວາມຜິດບາບອອກໄປ. ແຕ່ວ່າຂນະທີ່ລາວຈະອະທິຖານຕໍ່ພຣະເຈົ້າເພື່ອໃຫ້ຮັບເອົາຄວາມເສັຽໃຈທີ່ໄດ້ເຮັດຜິດບາບແລະຄວາມປາຖນາຂອງຕົນທີ່ຢາກມີຊີວິດທີ່ຊອບທັມ, ແລ້ວລະນຶກຂຶ້ນໄດ້ວ່າລາວຍັງມີເຣື່ອງຜິດກັບຜູ້ອື່ນຢູ່ທີ່ຍັງບໍ່ທັນໄດ້ແກ້ໄຂ. ລາວຕ້ອງ**ວາງເຄື່ອງບູຊາໄວ້ຕໍ່ໜ້າແທ່ນບູຊານັ້ນ**ກັບໄປຄືນດີກັບອ້າຍນ້ອງຜູ້ນັ້ນກ່ອນ. ເປັນດ້ວຍເຫດໃດ? ກໍເພາະວ່າເຄື່ອງຖວາຍບູຊາເທົ່ານັ້ນມັນຍັງບໍ່ພຽງພໍທີ່ຈະເຮັດໃຫ້ຄວາມສຳພັນຂອງລາວກັບພຣະເຈົ້າຕັ້ງຂຶ້ນໃໝ່ໄດ້. ພວກເຮົາຕ້ອງເຂົ້າຫາພຣະເຈົ້າດ້ວຍຄວາມເຊື່ອໝັ້ນວ່າເຮົາຢາກເຮັດທຸກສິ່ງທຸກຢ່າງເພື່ອຢາກຈະຄືນດີກັບຜູ້ທີ່ເຮັດຜິດຕໍ່ພວກເຮົາ.

ການກະທຳຂອງຄຣິສຕຽນບາງຄົນຄືການໄປໂບດຫລືປະຕິບັດຕາມກົດຕ່າງໆຂອງຫລັກສາສນາໂດຍຄິດວ່າມັນກໍພໍແລ້ວບໍ່ຈຳເປັນໃນການສ້າງຄວາມສງົບກັບຄົນອື່ນໆ. ເມື່ອພວກເຮົານະມັສການ, ສ່ວນນຶ່ງຂອງເຄື່ອງຖວາຍຕໍ່ພຣະເຈົ້ານັ້ນກໍຄືການເຊື່ອວ່າເຮົາເຮັດທຸກສິ່ງທຸກຢ່າງສຸດຂີດແລ້ວໃນການທີ່ຢາກຄືນດີກັບທຸກຄົນທີ່ເຮົາຄິດວ່າໄດ້ກະທຳຜິດຕໍ່ເຂົາ. ຈົນກວ່າພວກເຮົາເຮັດຈົນສຸດຄວາມສາມາດແລ້ວ, ຄຳເວົ້າຂອງພຣະເຢຊູ **ກັບໄປຄືນດີກັບອ້າຍນ້ອງຜູ້ນັ້ນເສັຽກ່ອນ** ແລ້ວຈຶ່ງມາຖວາຍເຄື່ອງບູຊາຂອງທ່ານ.

ພຣະເຈົ້າຈະປະຕິເສດການນະມັສການຂອງພວກເຮົາບໍ່ຖ້າຫາກວ່າຜູ້ທີ່ເຮົາເຮັດໃຫ້ເຈັບນັ້ນປະຕິເສດຄວາມພະຍາຍາມຂອງເຮົາທີ່ຢາກສ້າງຄວາມສງົບສຸກນັ້ນ? ບໍ່ເປັນດັ່ງນັ້ນດອກພຣະເຈົ້າຈະບໍ່ປະຄວາມສຳພັນຂອງພວກເຮົາກັບພຣະອົງໃນມືຂອງຜູ່ອື່ນເດັດຂາດ. ພຣະເຢຊູບໍ່ໄດ້ປະທານອຳນາດໃຫ້ພວກເຮົາໄປບັງຄັບຜູ້ອື່ນໃຫ້ສ້າງຄວາມສງົບກັບພວກເຮົາ. ພຣະທັມໂຣມ 12:18 ກ່າວວ່າດັ່ງນີ້, "ຖ້າເປັນໄດ້ໃນເຣື່ອງທີ່ຂື້ນຢູ່ກັບພວກເຈົ້ານັ້ນ ຈົ່ງຢູ່ຢ່າງສງົບສຸກກັບຄົນທັງປວງ." ພຣະເຈົ້າຮູ້ເຖິງຄວາມປາຖນາຂອງພວກເຮົາທີ່ຢາກມີຄວາມສງົບກັບຜູ້ອື່ນໆ, ພວກເຮົາກໍສາມາດພຽງແຕ່ເຮັດສ່ວນຂອງພວກເຮົາໃຫ້ບັງເກີດຂຶ້ນເທົ່ານັ້ນ. ເມື່ອໃດທີ່ພວກເຮົາຫາກເຮັດສ່ວນຂອງພວກເຮົາຢ່າງດີທີ່ສຸດແລ້ວໃນການຢາກຄືນດີກັບຜູ້ອື່ນໆ, ພວກເຮົາກໍພ້ອມແລ້ວທີ່ຈະນະມັສການແລະຄືນດີກັບພຣະເຈົ້າອີກ-ໂດຍທີ່ບໍ່ກ່ຽວຂ້ອງກັບການໂຕ້ຕອບຂອງຄົນອື່ນ.

### 3. <u>ຍົກໂທດຢ່າງຫມົດສິ້ນ</u> (ໂກໂລຊາຍ 3:12-15)

ຂ້າພະເຈົ້າໄດ້ນຳການນະມັສການໃນຕອນເຊົ້າວັນອາທິດທີ່ສະຖານີດັບເພີງໃນເມືອງແຫ່ງນຶ່ງ. ໃນຂນະທີ່ນະມັສການຢູ່ນັ້ນສຽງສັນຍານພັຍກໍດັງຂຶ້ນ, ແລະເຮັດໃຫ້ກຸ່ມນະມັສການຂອງຂ້າພະເຈົ້າແຕກສະລຸຜ່າຍຟ້າວຟັ່ງໃນການຢາກຈະຊ່ວຍກູ້ຊີວິດແລະສິ່ງຂອງອື່ນໆ. ກ່ອນທີ່ພວກດັບເພີງເຫລົ່ານີ້ຈະອອກໄປປະເຊີນກັບຫນ້າທີ່ໆອັນຕະລາຍນັ້ນ, ພວກເຂົາຫົ່ມເຄື່ອງປ້ອງກັນພັຍເພື່ອຊ່ວຍຜູ້ອື່ນໆແລະຕົວພວກເຂົາດ້ວຍ.

ເພາະພຣະເຢຊູເອີ້ນເອົາພວກຄຣິສຕຽນໃຫ້ເຮັດຫນ້າທີ່ອັນຍາກ ແລະອັນຕະລາຍໃນການປະເຊີນຊື່ງຫນ້າກັບບັນຫາຕ່າງໆແລະໃນການສ້າງຄວາມສງົບສຸກ, ພວກເຮົາຕ້ອງຫົ່ມນິສັຍທີ່ຈະປ້ອງກັນການເປັນພະຍານແລະຈັດຕຽມພວກເຮົາໃຫ້ສາມາດຊ່ວຍຜູ້ອື່ນໆໄດ້. ພວກເຮົາຕ້ອງສວມ**ໃຈເມດຕາ**ເພື່ອພວກເຮົາຈະສາມາດສຳຜັດກັບຄວາມຮູ້ສຶກແລະແກ້ໄຂຕໍ່ຄວາມເຈັບປວດຂອງຄົນອື່ນໆໄດ້. ຕ້ອງ**ສວມໃຈປານີ**ຖ້າຢາກເປັນຜູ້ສ້າງຄວາມສງົບສຸກ, ເຮັດແຕ່ຄວາມດີຕໍ່ຄົນອື່ນບໍ່ວ່າເຂົາຈະເຮັດສິ່ງໃດໆຕອບແທນ. ການມີ**ໃຈຖ່ອມລົງ**ເປັນນິສັຍທີ່ເຮັດໃຫ້ພວກເຮົາຈົດຈໍ່ໃສ່ແຜນການຂອງພຣະເຈົ້າ, ບໍ່ແມ່ນຂອງພວກເຮົາເອງ, ແລະຊ່ວຍໃຫ້ພວກເຮົາຮຽນຮູ້ຈາກຄວາມຜິດພາດຕ່າງໆນັ້ນ. **ໃຈອ່ອນສຸພາບ**ຂອງພວກເຮົານັ້ນສະແດງເຖິງຄວາມຢາກປົວແປງໃຫ້ຄືນດີ, ບໍ່ແມ່ນຫວັງທຳຮ້າຍ. ການຄືນດີກັນສ່ວນຫລາຍມັນເປັນຫົນທາງທີ່ຍາວໄກຊຶ່ງຕ້ອງການ**ຄວາມອົດທົນດົນນານ**ຫລາຍທີ່ສຸດ.

**ການຜ່ອນຫນັກຜ່ອນເບົາແລະການຍົກໂທດໃຫ້ຊຶ່ງກັນແລະກັນ**ມັນພົວພັນກັນໃນພຣະຄຳຕອນນີ້ແລະຈຳເປັນຕໍ່ການຄືນດີກັນ. ພວກເຮົາຈະບໍ່ສາມາດຍົກໂທດໃຫ້ຄົນອື່ນໆຢ່າງຫມົດສິ້ນໄດ້ຖ້າເຮົາຫາກບໍ່ຜ່ອນຫນັກຜ່ອນເບົາຊຶ່ງກັນແລະກັນ. ພວກເຮົາຈະຊອກຫາເຫດຜົນແລະຈະຊຸກພວກເຂົາໃຫ້ຫ່າງອອກໄປ, ນັ້ນບໍ່ແມ່ນທາງທີ່ຈະອ້າແຂນຮັບພວກເຂົາໃນທາງແຫ່ງຄວາມຮັກ. ໃນປໂຍກທີ່ວ່າ**ຖ້າແມ່ນຜູ້ໃດມີເຣື່ອງຕໍ່ກັນ**ກໍໃຫ້ຜູ້ທີ່ເຄືອງໃຈນັ້ນເປັນຜູ້ເລີ້ມຕົ້ນຊອກຫາທາງທີ່ຈະຄືນດີກັນ.

ທ່ານໂປໂລໄດ້ໃຫ້ຄຳປຶກສານີ້ເທິງພື້ນຖານການເລີ້ມຕົ້ນກ່ອນຂອງພຣະເຈົ້າຕໍ່ມະນຸດ. **ອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດຍົກໂທດໃຫ້ເຈົ້າທັງຫລາຍສັນໃດ, ພວກເຈົ້າກໍຈົ່ງຍົກໂທດໃຫ້ກັນແລະກັນສັນນັ້ນ.** ພວກເຮົາຍົກໂທດໃຫ້ຊຶ່ງກັນແລະກັນກໍເພາະວ່າພຣະເຢຊູຄຣິດໄດ້ສະແດງໃຫ້ພວກເຮົາໄດ້ເຫັນວ່າ ການໃຫ້ອະພັຍກັນນຳຄວາມແຕກຕ່າງມາສູ່ຫລາຍຊໍ່າໃດ. ສິ່ງທີ່ພຣະອົງໄດ້ເຮັດເພື່ອພວກເຮົານັ້ນ, ພວກເຮົາຖືກເອີ້ນມາໃຫ້ເຮັດການຢ່າງນັ້ນຕໍ່ຄົນທັງປວງ.

ນິສັຍແລະການກະທຳຕ່າງໆເຫລົ່ານີ້ແມ່ນຂໍ້ເດັດລັບທີ່ມາຮວມຕົວເຂົ້າເປັນຊີວິດແຫ່ງຄວາມຮັກ. **ນອກຈາກສິ່ງທັງປວງນີ້ຈົ່ງເອົາຄວາມຮັກທີ່ເປັນສາຍຜູກມັດທຸກສິ່ງໄວ້ໃຫ້ເຖິງຄວາມຄົບຖ້ວນ.** ເມື່ອພວກເຮົາຫາກເອົາຂໍ້ເດັດ

ລັບເຫລົ່ານີ້ມາຮວມໃສ່ກັນແລະຮັກຊຶ່ງກັນແລະກັນ, ພວກເຮົາກໍ**ຈະຢູ່ໃນກາຍອັນດຽວກັນແລະສັນຕິສຸກທີ່ມາຈາກພຣະຄຣິດກໍຈະຄຸ້ມຄອງຈິດ**ໃຈຂອງພວກເຮົາ. ຄຳວ່າສັນຕິສຸກໃນທີ່ນີ້ເລັງເຖິງການຢູ່ດີກິນດີແລະທຸກສິ່ງທຸກຢ່າງຢູ່ພາຍໃຕ້ກົດລະບຽບຂອງພຣະເຈົ້າ.

ພວກເພື່ອນໆຂອງຂ້າພະເຈົ້າທີ່ຮັບໃຊ້ໃນການທະຫານໄດ້ສອນບົດຮຽນອັນສຳຄັນແກ່ຂ້າພະເຈົ້າວ່າ: ຜູ້ທີ່ເສັຽສະລະຫລາຍກວ່າໝູ່ທັງໝົດເພື່ອຄວາມສງົບສຸກແມ່ນຜູ້ທີ່ໄດ້ຄວາມກະຕັນຍູຕອບຫລາຍກ່ວາໝູ່ທັງໝົດ.      ໃນພຣະທັມຕອນນີ້ມີຄຳທ້າທາຍດັ່ງນີ້: **<u>ກະຕັນຍູ</u>**(ຮູ້ບຸນຄຸນ).  ໃຫ້ພວກເຮົາເຮັດວຽກອັນຍາກຊາຂອງການຄືນດີກັນນີ້ເພື່ອພວກເຮົາຈະໄດ້ຖນອມແລະຮັກສາບໍ່ໃຫ້ພຣະພອນແຫ່ງສັນຕິສຸກຈາງຫາຍໄປ.

## <u>ບົດຮຽນຊີວິດ</u>

ໃນຄາບເຊົ້າສວຍຫລັງຈາກການນະມັສການໃນມື້ນັ້ນ.    ຂ້າພະເຈົ້າສວຍໂອກາດຍ່າງໄປທີ່ໂຕະບ່ອນດານີເອນກຳລັງກິນເຂົ້າຢູ່ນັ້ນ.  ເມັຽຂອງລາວໄດ້ເສັຽຊີວິດໄປແລ້ວແລະລາວໄດ້ແນະນຳເພື່ອນຍິງທີ່ລາວພົບໃນບ່ອນພັກຂອງຄົນແກ່ຊະຣາທີ່ລາວອາສັຍຢູ່. ຂ້າພະເຈົ້າໄດ້ບອກເພື່ອນຂອງລາວເຖິງສິ່ງດີໆຫລາຍຢ່າງທີ່ດານີເອນໄດ້ເຮັດຕໍ່ຂ້າພະເຈົ້າແລະຄອບຄົວ. ດານີເອນຕັ້ງໃຈຟັງແລະກໍເອີ່ຍອອກມາວ່າ: ເຈົ້າກໍຮູ້ຢູ່ວ່າຂ້ອຍໂກດເຄືອງຕໍ່ເຈົ້າໂພດໃນທີ່ຜ່ານມານັ້ນ.   ຂ້າພະເຈົ້າກໍຕອບລາວວ່າຂ້ອຍກໍດີ້ດຶງສົມຄວນໂດຍບໍ່ຍອມຟັງຄວາມເຈົ້າໃນຕອນນັ້ນຄືກັນ. ພວກຂ້າພະເຈົ້າກໍຢືນຂຶ້ນໂອບກອດດ້ວຍຄວາມຮັກແລະຊາບຊຶ້ງຕໍ່ຄວາມຮູ້ສຶກໃນການໄດ້ຜ່ອນໜັກຜ່ອນເບົາຕໍ່ກັນແລະກັນແລະຍິນດີທີ່ໄດ້ຄືນດີກັນອີກຫລັງຈາກໄດ້ຖືກແຍກກັນເປັນເວລາກວ່າສິບປີ.     ຂ້າພະເຈົ້າຮູ້ສຶກປິຕິຍິນດີເໝືອນໄດ້ກັບຄືນບ້ານເດີມເມື່ອມາທີ່ໂບດແຫ່ງນີ້. ປະມານເດືອນນຶ່ງຕໍ່ມາ, ຂ້າພະເຈົ້າໄດ້ຮັບຂ່າວວ່າດານີເອນໄດ້ເສັຽຊີວິດໄປແລ້ວ.  ຂ້າພະເຈົ້າສຸດແສນດີໃຈທີ່ໄດ້ໃຊ້ໂອກາດສຸດທ້າຍນັ້ນຄືນດີກັບດານີເອນອີກ.

- ຕຽມຕົວໄວ້ໃຫ້ພ້ອມທີ່ຈະເລີ້ມຕົ້ນໃໝ່ອີກ, ເພື່ອພຣະເຈົ້າຈະນຳສິ່ງດີໆອອກມາຈາກສິ່ງທີ່ບໍ່ດີທີ່ຜູ້ອື່ນໄດ້ກະທຳຕໍ່ທ່ານນັ້ນ.
- ຈັດໃຫ້ການກັບຄືນດີກັນເປັນລຳດັບນຶ່ງ, ໂດຍຮູ້ແລ້ວວ່າທ່ານຈະເຮັດໃຫ້ຖືກຕ້ອງກັບພຣະເຈົ້າບໍ່ໄດ້ຈົນກວ່າທ່ານຈະເຮັດທຸກສິ່ງທຸກຢ່າງຈົນສຸດກຳລັງຂອງທ່ານໃຫ້ຖືກຕ້ອງກັບຄົນອື່ນໆກ່ອນ.
- ຍົກໂທດໃຫ້ຢ່າງໝົດສິ້ນ, ພຣະເຢຊູຄຣິດໄດ້ກະທຳເພື່ອທ່ານຢ່າງໃດກໍກະທຳຢ່າງນັ້ນຕໍ່ຄົນອື່ນໆດ້ວຍ.